ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 15 ຫາ 19 ພຶດສະພາ 2023




ທ່ອງທ່ຽວອະນຸລັກ ກັບເຂດອະນຸລັກປ່າໂຄກ ໂອ່ງ-ມັ່ງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ທ່ອງທ່ຽວອະນຸລັກ ກັບເຂດອະນຸລັກ ປ່າໂຄກ ໂອງ-ມັ່ງ THE ELD'S DEER

ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ໄດ້ເລີ່ມຕົ້ນແຕ່ປີ 2016 ເປັນຕົ້ນມາການສະໜັບສະໜູນຂອງກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ປະຈຳລາວ ຮ່ວມຈັດຕັ້ງປະຕິບັດກັບ ກະຊວງກະສິກຳ ແລະ ປ່າໄມ້, ກົມປ່າໄມ້.

ເພື່ອສາທິດການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ແລະ ເພື່ອເປັນການອະນຸລັກຄວາມຫຼາກຫຼາຍດ້ານຊີວະນາໆພັນ, ຈັດສັນຄຸນະພາບນ້ຳ, ປ້ອງກັນໄພນ້ຳຖ້ວມໃນພື້ນທີ່ ພ້ອມທັງເປັນການປົກປ້ອງທີ່ຢູ່ອາໃສຂອງບັນດາສັດປ່າທີ່ສຳຄັນ ແລະ ໃກ້ສູນພັນ ໂດຍສະເພາະແມ່ນ ໂອງ-ມັ່ງ ເຊິ່ງເປັນສັດຫາຍາກ ແລະ ໃກ້ສູນພັນຢູ່ໃນບັນຊີສັດປ່າສາກົນ IUCN 2006. ປັດຈຸບັນ, ຍັງເຫຼືອໃນທຳມະຊາດພຽງໃນບໍລິເວນປ່າໂຄກ ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ແລະ ໃນເຂດສະຫງວນຂອງປະເທດກຳ ປູເຈຍເທົ່ານັ້ນ.

ໂອງ-ມັ່ງ ມີຊື່ວິທະຍາສາດວ່າ Rucervus eldi siamensis ໄດ້ຖືກຍົກໃຫ້ເປັນສັດຊະນິດພັນທີ່ມີຄວາມສຳຄັນ ແລະ ມີບົດບາດ ໃນລະບົບນິເວດປ່າໂຄກຂອງ ສປປ ລາວ. ໂອງ-ມັ່ງ ອາໄສຢູ່ຮ່ວມກັນເປັນຝຸງ 3 ຫາ 8 ໂຕ ເປັນສັດຕະກຸນດຽວກັບກວາງ, ພວກມັນເປັນສັດທີ່ມີຮູບຮ່າງທີ່ໜ້າປະທັບໃຈ ແລະສວຍງາມເມື່ອຍາມໄດ້ພົບເຫັນ, ໂດຍສະເພາະໂຕຜູ້ໃຫຍ່ ຈະມີເຂົາທີ່ໃຫຍ່ໂຄ້ງ ແລະ ແຕກເປັນຫຼາຍກິ່ງ




ນ້ອຍທີ່ປາຍເຂົາ, ສ່ວນຕົວແມ່ຈະບໍ່ມີເຂົາ. ຕີນຕົວຂອງພວກມັນຮຽວຍາວ, ຄໍບາງຍາວ, ຫາງສັ້ນ ແລະ ຂາຮຽວສູງ. ຕົວໃຫຍ່ເຕັມໄວ ຈະສູງປະມານ 1,50 ຫາ 1,80 ແມັດ ແລະ ມີນ້ຳໜັກປະມານ 90 ຫາ 150 ກິໂລກຼາມ ຕົວຜູ້ຈະໃຫຍ່ ແລະ ໜັກກວ່າ. ອາຍຸຂອງພວກມັນ ໂດຍສະເລ່ຍ ໃນສວນສັດແມ່ນປະມານ 15 ປີ, ສ່ວນໃນທຳມະຊາດຈະໜ້ອຍກວ່າ, ພືດອາຫານ ຂອງພວກມັນ ມີຫຼາກຫຼາຍຊະນິດ ຊຶ່ງຫຼັກໆແມ່ນຫຍ້າ, ໃບໄມ້ອ່ອນ, ໝາກ, ດອກ ແລະ ພືດລົ້ມລຸກ ລວມທັງເຂົ້ານາ ທີ່ພວກມັນຫາໄດ້ໃນປ່າໂຄກ, ປ່າປະສົມ ແລະ ທົ່ງຫຍ້າ ບໍລິເວນທີ່ຢູ່ອາໄສຕາມລະດູ. ບາງຊະນິດໝາກໄມ້ ແລະ ຫຍ້າທີ່ສຳຄັນ ເຊັ່ນ: ໝາກບົກ, ໝາກມ່ວງປ່າ, ໝາກຂາມປ້ອມ, ໝາກລິ້ນໂມງ, ລິ້ນໝໍ, ຫຍ້າດູກຂຽດ, ຫຍ້າເລົາ, ເຂົ້ານາ ແລະ ອື່ນໆ.

ໃນອະດີດນັ້ນ ເຊື່ອກັນວ່າ ໂອງ-ມັ່ງ ໄດ້ສູນພັນໄປແລ້ວໃນປະເທດລາວ ເພາະບໍ່ມີການພົບເຫັນໃນໄລຍະຫຼາຍປີທີ່ຜ່ານມາ ປັດຈຸບັນ ຢູ່ ສປປ ລາວ, ເມືອງ ຊົນນະບູລີ, ແຂວງ ສະຫວັນນະເຂດ ໂດຍໄດ້ຮັບການສຳຫຼວດ ແລະ ຢັ້ງຢືນໃນ ປີ 2019 ແລ້ວວ່າມີໂອງ-ມັ່ງ ປະມານ 173 ໂຕ ແລະ ເປັນພຽງທີ່ດຽວໃນປະເທດລາວທີ່ຍັງສາມາດພົບເຫັນສັດຊະນິດນີ້ໄດ້. ເຊິ່ງເຂດອະນຸລັກຂອງທ້ອງຖິ່ນຖືກສະເໜີຮັບຮອງເປັນລະດັບຊາດ ແລະ ກາຍເປັນເຂດອະນຸລັກພັນສັດປ່າ ແລະ ຊີວະນາໆພັນແຫ່ງທຳອິດໃນປະເທດລາວ ໂດຍມີພື້ນທີ່ປະມານ 130,745 ເຮັກຕາ ພາຍໃຕ້ຊື່ ເຂດອະນຸລັກປ່າໂຄກ ໂອງ-ມັ່ງແຫ່ງຊາດ, ເຊິ່ງສິ່ງນີ້ເປັນໝາກຜົນອັນເປັນທີ່ປະຈັກຕາ ຂອງການທຸ້ມເທທັງງົບປະມານ ແລະ ແນວຄວາມຄິດເພື່ອການອະນຸລັກ ໃນໄລຍະ 5 ປີ ທີ່ຜ່ານມາທີ່ບໍ່ໄດ້ສູນເປົ່າ.

ມາຮອດປັດຈຸບັນເຂດອະນຸລັກປ່າໂຄກ ໂອງ-ມັ່ງແຫ່ງຊາດ, ເມືອງ ຊົນນະບູລີ, ແຂວງ ສະຫວັນນະເຂດ ຍັງໄດ້ກາຍເປັນສະຖານທີ່ທ່ອງທ່ຽວອະນຸລັກໃໝ່ອີກໜຶ່ງແຫ່ງຂອງ ແຂວງສະຫວັນນະເຂດ ທີ່ໄດ້ເປີດເປັນທາງການ ໃນທ້າຍປີ 2020 ທີ່ຜ່ານມາ,

ກອງອະນຸລັກປ່າໂລກ ໂອງ-ມັ່ງ ແຫ່ງ ນີ້ໄດ້ຮັບການຍົກລະດັບໃຫ້ເປັນເຂດອະນຸລັກປ່າໂລກໂອງ-ມັ່ງແຫ່ງຊາດ ເຊິ່ງມີຈຸດປະສົງເພື່ອະນຸລັກສັດປ່າ ແລະ ຊີວະນາໆພັນພ້ອມສົ່ງເສີມການທ່ອງທ່ຽວ, ສົ່ງເສີມປະຊາຊົນໃນການປັບປຸງຊີວິດການເປັນຢູ່ໃນການປູກ-ການລ້ຽງໃຫ້ມີຄວາມຍືນຍົງ.

ສຳລັບບຸກຄົນທົ່ວໄປທີ່ມີຄວາມສົນໃຈ ເຂົ້າໄປທ່ອງທ່ຽວ, ສຶກສາຊີວິດສັດປ່າແບບໃກ້ຊິດທາງກອງອະນຸລັກປ່າໂລກ ໂອງ-ມັ່ງ ກໍມີບໍລິການທີ່ພັກ ແລະ ກິດຈະກຳການກາງເຕັ້ນ, ຍ່າງປ່າຊົມນົກ ແລະ ພື້ນທີ່ຢູ່ອາໄສຂອງໂອງ-ມັ່ງ ໃຫ້ບໍລິການ, ເຊິ່ງໃນໄລຍະຕົ້ນລະດູຝົນ ປ່າໄມ້ທົ່ງຫຍ້າຈະຂຽວງາມຊຸ່ມຊື່ນ, ຜູ້ໄປຊົມຈະໄດ້ພົບເຫັນດອກກະຈຽວປ່າບານສີສັນສວຍງາມ ແລະ ໃນໄລຍະທ້າຍລະດູຝົນ ການເຂົ້າເຖິງພື້ນຈະສະດວກ, ສ່ວນສະເພາະລະດູໜາວ ຜູ້ໄປທ່ອງທ່ຽວຈະສາມາດເຫັນໂຕໂອງ-ມັ່ງ ໄດ້ໃນຕອນເຊົ້າໆ ແລະ ຕອນບ່າຍ ປະມານ 3 ໂມງ ຫາ 5 ໂມງແລງນຳອີກ.








**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;